ສາລະບານ

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ..... 3
ໝວດທີ I ບົດບັນຍັດທົ່ວໄປ ..... 3
ມາດຕາ 1. ຈຸດປະສົງ ..... 3
ມາດຕາ 2. ການສໍ້ລາດບັງຫຼວງ ..... 3
ມາດຕາ 3. ການສະກັດກັ້ນ ແລະການຕ້ານການສໍ້ລາດບັງຫຼວງ ..... 4
ມາດຕາ 4. ຫຼັກການຕ້ານການສໍ້ລາດບັງຫຼວງ ..... 4
ມາດຕາ 5. ຄວາມຮັບຜິດຊອບ ຂອງອົງການຕ້ານການສໍ້ລາດບັງຫຼວງ ..... 4
ມາດຕາ 6. ພັນທະໃນການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ..... 4
ມາດຕາ 7. ການປົກປ້ອງ ..... 5
ມາດຕາ 8. ຂອບເຂດການນຳໃຊ້ກົດໝາຍ ..... 5
ມາດຕາ 9. ການພົວພັນ ແລະຮ່ວມມືສາກົນ ..... 5
ໝວດທີ II ພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ..... 5
ມາດຕາ 10. ພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງ ..... 5
ມາດຕາ 11. ການຍັກຍອກຊັບຂອງລັດ ຫລືລວມໝູ່ ..... 6
ມາດຕາ 12. ການສໍ້ໂກງຊັບຂອງລັດ ຫລືລວມໝູ່ ..... 6
ມາດຕາ 13. ການຮັບສິນບົນ ..... 6
ມາດຕາ 14. ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ..... 6
ມາດຕາ 15 ການສວຍໃຊ້ຊັບຂອງລັດ ຫລືລວມໝູ່ ..... 6
ມາດຕາ 16 ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ..... 6
ມາດຕາ 17 ການຫຼົກໂລບ, ປອມແປງມາດຕະຖານ ເຕັກນິກກໍ່ສ້າງ ..... 7
ມາດຕາ 18. ການໂກງການປະມູນ ຫຼືການສຳປະທານ ..... 7
ມາດຕາ 19. ການປອມແປງເອກະສານ ຫຼືການໃຊ້ເອກະສານປອມ ..... 7
ມາດຕາ 20. ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ ..... 7
ມາດຕາ 21. ການກົດໜ່ວງ, ຖ່ວງດຶງເອກະສານ ..... 7
ໝວດທີ III ມາດຕະການສະກັດກັ້ນການສໍ້ລາດບັງຫຼວງ ..... 8
ມາດຕາ 22. ການເປັນແບບຢ່າງ ຂອງພະນັກງານນຳພາ ..... 8
ມາດຕາ 23. ຄວາມຮັບຜິດຊອບຂອງລັດ ..... 8
ມາດຕາ 24. ຄວາມຮັບຜິດຊອບ ຂອງການຈັດຕັ້ງຕ່າງໆ ..... 8
ມາດຕາ 25. ຂໍ້ຫ້າມ ຕໍ່ຜູ້ທີ່ມີຖານະຕຳແໜ່ງ, ສິດອຳນາດ ແລະໜ້າທີ່ ..... 8
ມາດຕາ 26. ການແຈ້ງຊັບສິນ ..... 9
ໝວດທີ IV ການດຳເນີນການກວດກາ ການສໍ້ລາດບັງຫຼວງ ..... 10
ມາດຕາ 27. ສາເຫດທີ່ພາໃຫ້ມີການດຳເນີນການກວດກາ ..... 10
ມາດຕາ 28. ຂັ້ນຕອນການດຳເນີນການກວດກາ ..... 10

ມາດຕາ 29. ການຕິກລິ່ງ ກ່ຽວກັບຜົນຂອງການກວດກາ......................................10
ມາດຕາ 30. ການປະຕິບັດຄຳສະເໜີ ຂອງອົງການຕ້ານການສໍ້ລາດບັງຫຼວງ ............11
ໝວດທີ V ມາດຕະການຕ້ານ ແລະແກ້ໄຂການສໍ້ລາດບັງຫຼວງ ..................................11
ມາດຕາ 31. ມາດຕະການແກ້ໄຂ ..................................................................11
ມາດຕາ 32. ການສຶກສາອົບຮົມ ....................................................................11
ມາດຕາ 33. ການປະຕິບັດວິໄນ ....................................................................11
ມາດຕາ 34. ການດຳເນີນຄະດີ ....................................................................12
ໝວດທີ VI ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.............................................12
ມາດຕາ 35. ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ........................................12
ມາດຕາ 36. ການກວດກາການປະຕິບັດຄຳຕັດສິນຂອງສານ ................................12
ໝວດທີ VII ອົງການຕ້ານການສໍ້ລາດບັງຫຼວງ.....................................................12
ມາດຕາ 37. ທີ່ຕັ້ງ, ພາລະບົດບາດ ..............................................................12
ມາດຕາ 38. ລະບົບການຈັດຕັ້ງ ....................................................................13
ມາດຕາ 39. ສິດ ແລະໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ........13
ມາດຕາ 40. ສິດ ແລະໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ..........14
ມາດຕາ 41. ມາດຕະຖານ, ເງື່ອນໄຂ ຂອງພະນັກງານຕ້ານການສໍ້ລາດບັງຫຼວງ........14
ໝວດທີ VIII ພັນທະ, ຄວາມຮັບຜິດຊອບ ແລະສິດ ຂອງຜູ້ຖືກກວດກາ........................15
ມາດຕາ 42. ພັນທະ ແລະຄວາມຮັບຜິດຊອບຂອງຜູ້ຖືກກວດກາ...........................15
ມາດຕາ 43. ສິດຂອງຜູ້ຖືກກວດກາ...............................................................15
ໝວດທີ IX ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ .....................16
ມາດຕາ 44. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ .........................................................16
ມາດຕາ 45. ມາດຕະການຕໍ່ຜູ້ລະເມີດ...........................................................16
ມາດຕາ 46. ມາດຕະການທາງອາຍາ.............................................................16
ມາດຕາ 47. ການຫຼົກໂລບ, ການປອມແປງ ມາດຕະຖານເຕັກນິກກໍ່ສ້າງ,
ອອກແບບ, ຄິດໄລ່ ......................................................................................16
ມາດຕາ 48. ການໂກງການປະມູນ ຫຼືການສຳປະທານ.........................................17
ມາດຕາ 49. ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດ ...............................17
ມາດຕາ 50. ການກົດໜ່ວງ, ຖ່ວງດຶງເອກະສານ.................................................17
ມາດຕາ 51. ມາດຕະການທາງແພ່ງ...............................................................17
ໝວດທີ X ບົດບັນຍັດສຸດທ້າຍ .....................................................................17
ມາດຕາ 52. ການຈັດຕັ້ງປະຕິບັດ .................................................................17
ມາດຕາ 53. ຜົນສັກສິດ ............................................................................18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ ເລກທີ 03 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 19 ພຶດສະພາ 2005

# ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ

## ໝວດທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

**ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ກໍານົດຫຼັກການ, ລະບຽບການ ແລະມາດ ຕະການໃນການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ເພື່ອບໍ່ໃຫ້ຊັບ ຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດຂອງພົນລະເມືອງ ຖືກເສຍຫາຍ, ຖືກຍັກຍອກ ຫຼືສໍ້ໂກງເອົາໄປ, ນໍາເອົາຜູ້ກະ ທໍາຜິດມາດໍາເນີນຄະດີ ແລະປົກປ້ອງຜູ້ບໍລິສຸດ, ແນ ໃສ່ເຮັດໃຫ້ອົງການລັດມີຄວາມເຂັ້ມແຂງ, ໂປ່ງ ໃສ ແລະສາມາດກວດກາໄດ້ທຸກເວລາ, ເຮັດໃຫ້ມີສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ ຂະຫຍາຍຕົວ ແລະໝັ້ນຄົງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະມີຄວາມຍຸຕິທໍາ.**

### ມາດຕາ 2. ການສໍ້ລາດບັງຫຼວງ

ການສໍ້ລາດບັງຫຼວງ ແມ່ນພຶດຕິກໍາ ຂອງພະນັກງານ ທີ່ໄດ້ສວຍໃຊ້ຖານະຕໍາ ແໜ່ງ, ສິດອໍານາດ, ໜ້າທີ່ຂອງຕົນ ເພື່ອຍັກຍອກ, ສໍ້ໂກງ, ຮັບສິນບົນ ແລະພຶດຕິກໍາອື່ນໆ ທີ່ໄດ້ກໍານົດໄວ້ໃນ ມາດຕາ 10 ຂອງກົດໝາຍສະບັບນີ້ ເພື່ອຫາຜົນປະໂຫຍດໃຫ້ຕົນເອງ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະ ໂຫຍດຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດຂອງພົນລະເມືອງ;

ພະນັກງານ ທີ່ໄດ້ກ່າວໄວ້ໃນກົດໝາຍສະບັບນີ້ ໝາຍເຖິງພະນັກງານນໍາພາ ຂັ້ນຕ່າງໆ, ພະນັກງານຄຸ້ມຄອງ, ພະນັກງານວິຊາການ, ພະນັກງານລັດວິສາຫະກິດ, ລັດຖະກອນ, ທະຫານ, ຕໍາຫຼວດ ລວມທັງນາຍບ້ານ ແລະຜູ້ໄດ້ຮັບມອບສິດ, ໜ້າທີ່ໃດ ໜຶ່ງຈາກທາງການ.

### ມາດຕາ 3. ການສະກັດກັ້ນ ແລະການຕ້ານການສໍ້ລາດບັງຫຼວງ

ການສະກັດກັ້ນການສໍ້ລາດບັງຫຼວງ ແມ່ນການຈຳກັດ, ການປ້ອງກັນ ບໍ່ໃຫ້ການສໍ້ລາດບັງ ຫຼວງເກີດຂຶ້ນ ຢູ່ໃນການຈັດຕັ້ງລັດ, ການເມືອງ ແລະສັງຄົມ ດ້ວຍການໂຄສະນາສຶກສາອົບຮົມ, ການແຈ້ງຊັບສິນ, ການກວດກາ, ການປະຕິບັດນະໂຍບາຍ ແລະອື່ນໆ.

ການຕ້ານການສໍ້ລາດບັງຫຼວງ ແມ່ນການກຳຈັດ, ປາບປາມ ແລະລຶບລ້າງທຸກການກະທຳທີ່ ເປັນການສໍ້ລາດບັງຫຼວງ ດ້ວຍການກວດກາ, ການສຶກສາອົບຮົມ, ການປະຕິບັດວິໄນ ແລະການລົງ ໂທດຕາມກົດໝາຍ.

### ມາດຕາ 4. ຫຼັກການຕ້ານການສໍ້ລາດບັງຫຼວງ

ການຕ້ານການສໍ້ລາດບັງຫຼວງ ຕ້ອງດຳເນີນຕາມຫຼັກການ ດັ່ງນີ້:

- ຖືເອົາການສະກັດກັ້ນເປັນຕົ້ນຕໍ ແລະເອົາການຕ້ານເປັນສຳຄັນ;
- ດຳເນີນການກວດກາຢ່າງທັນການ, ເຂັ້ມງວດ, ເປັນເອກະລາດ, ພາວະວິໄສ ແລະຊັດ ເຈນ ຕໍ່ທຸກປາກົດການສໍ້ລາດບັງຫຼວງ;
- ແກ້ໄຂຢ່າງເຂັ້ມງວດ, ທັນການ ແລະຍຸຕິທຳ ໃນກໍລະນີທີ່ມີການກະທຳຜິດ;
- ຮັບປະກັນ ບໍ່ໃຫ້ມີການແຊກແຊງ, ຂັດຂວາງ ຫຼືນາບຂູ່ ຈາກບຸກຄົນ ຫຼືການຈັດຕັ້ງໃດໜຶ່ງ;
- ບຸກຄົນ ແລະການຈັດຕັ້ງທີ່ຖືກກວດກາ ຕ້ອງໃຫ້ການຮ່ວມມື, ສ້າງເງື່ອນໄຂ ແລະອຳ ນວຍຄວາມສະດວກໃຫ້ແກ່ການກວດກາ;
- ລັດ ຕ້ອງສ້າງເງື່ອນໄຂໃຫ້ພົນລະເມືອງ, ການຈັດຕັ້ງທາງສັງຄົມ ແລະສື່ມວນຊົນ ໄດ້ມີສ່ວນຮ່ວມໃນການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ຕາມລະບຽບການ.

### ມາດຕາ 5. ຄວາມຮັບຜິດຊອບ ຂອງອົງການຕ້ານການສໍ້ລາດບັງຫຼວງ

ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງປະຕິບັດໜ້າທີ່ຂອງຕົນ ຢ່າງພາວະວິໄສ, ໂປ່ງໃສ, ຖືກຕ້ອງຕາມຄວາມເປັນຈິງ, ຕາມສິດ, ໜ້າທີ່ ແລະຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ ພ້ອມທັງ ຮັບຜິດຊອບສູງຕໍ່ໜ້າກົດໝາຍ ກ່ຽວກັບການເຄື່ອນໄຫວຂອງຕົນ ແລະຢູ່ພາຍໃຕ້ການກວດກາຂອງ ສະພາແຫ່ງຊາດ.

### ມາດຕາ 6. ພັນທະໃນການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ

ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະພົນລະເມືອງທຸກຄົນ ມີພັນທະປະກອບສ່ວນ ເຂົ້າໃນການເຄື່ອນໄຫວສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ດ້ວຍການຮ່ວມ

ມີ, ອຳນວຍຄວາມສະດວກ, ສະໜອງຂໍ້ມູນ, ຫຼັກຖານ ໃຫ້ແກ່ອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງ ຢ່າງທັນການ.

### ມາດຕາ 7. ການປົກປ້ອງ

ພະນັກງານ ທີ່ດຳເນີນການຕ້ານການສໍ້ລາດບັງຫຼວງ ລວມທັງຜູ້ທີ່ເຂົ້າຮ່ວມໃນວຽກງານດັ່ງກ່າວເຊັ່ນ: ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນຂ່າວສານ, ຜູ້ເສຍຫາຍ, ພະຍານ, ຊ່ຽວຊານ ຕ້ອງໄດ້ຮັບການປົກ ປ້ອງຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະຫຼະພາບ, ກຽດຊື່ສຽງ ຫລືຊັບສິນ.

### ມາດຕາ 8. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ຕໍ່ພະນັກງານນຳພາຂັ້ນຕ່າງໆ, ພະນັກງານຄຸ້ມຄອງ, ພະນັກງານວິ ຊາການ, ພະນັກງານລັດວິສາຫະກິດ, ລັດຖະກອນ, ທະຫານ, ຕຳຫຼວດ ທີ່ມີຖານະຕຳແໜ່ງ, ສິດອຳ ນາດ, ໜ້າທີ່ ຊຶ່ງສັງກັດຢູ່ໃນກົງຈັກການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງ ມະຫາຊົນ, ລັດວິສາຫະກິດ, ລັດວິສາຫະກິດປະສົມ, ລັດຮຸ້ນສ່ວນ, ກອງບໍລິຫານວິຊາການ, ທຸກການຈັດຕັ້ງການຜະລິດທຸລະກິດ ທີ່ລັດຈັດຕັ້ງຂຶ້ນ ລວມທັງນາຍບ້ານ ແລະຜູ້ໄດ້ຮັບມອບໝາຍສິດ, ໜ້າທີ່ໃດໜຶ່ງຈາກທາງການ.

### ມາດຕາ 9. ການພົວພັນ ແລະຮ່ວມມືສາກົນ

ລັດ ພົວພັນຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ບົນພື້ນຖານລະບຽບກົດໝາຍ ຂອງ ສ.ປ.ປ. ລາວ, ສອດຄ່ອງກັບ ສັນຍາ ແລະສົນທິສັນຍາ ທີ່ ສ.ປ.ປ. ລາວ ໄດ້ລົງນາມ ແລະຮ່ວມເປັນພາຄີ.

## ໝວດທີ II ພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ

### ມາດຕາ 10. ພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງ

ພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງສະແດງອອກດັ່ງນີ້:

- ການຍັກຍອກຊັບຂອງລັດ ຫລືລວມໝູ່;
- ການສໍ້ໂກງຊັບຂອງລັດ ຫລືລວມໝູ່;
- ການຮັບສິນບົນ;
- ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
- ການສວຍໃຊ້ຊັບຂອງລັດ ຫລືລວມໝູ່;
- ການໃຊ້ອຳນາດເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼືບຸກຄົນ;

- ການຫຼັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ອອກແບບ, ຄິດໄລ່ ແລະອື່ນໆ;
- ການໂກງການປະມູນ ຫຼືການສໍາປະທານ;
- ການປອມແປງເອກະສານ ຫຼືການໃຊ້ເອກະສານປອມ;
- ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ;
- ການກົດໜ່ວງ, ຖ່ວງດຶງເອກະສານ.

## ມາດຕາ 11. ການຍັກຍອກຊັບຂອງລັດ ຫລືລວມໝູ່

ການຍັກຍອກຊັບຂອງລັດ ຫຼືລວມໝູ່ ແມ່ນການສວຍໃຊ້ຄວາມເຊື່ອໃຈ ເພື່ອຫຼັກໂລບເອົາ, ຕັດຮອນເອົາ ຫຼືສັບປ່ຽນເອົາຊັບຂອງລັດ ຫຼືລວມໝູ່ ທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ, ຂົນສົ່ງ, ກໍ່ສ້າງ, ສ້ອມແປງ ຫຼືເຮັດວຽກໃດວຽກໜຶ່ງ.

## ມາດຕາ 12. ການສໍ້ໂກງຊັບຂອງລັດ ຫລືລວມໝູ່

ການສໍ້ໂກງຊັບຂອງລັດ ຫຼືລວມໝູ່ ແມ່ນການໃຊ້ເລ່ຫລ່ຽມ ຕົວະຍົວະ, ຫຼອກລວງດ້ວຍວິທີໃດ ກໍຕາມ ເພື່ອເຮັດໃຫ້ຜູ້ທີ່ມີໜ້າທີ່ຮັບຜິດຊອບຊັບຂອງລັດ ຫຼືລວມໝູ່ ຫຼືຜູ້ອື່ນເອົາຊັບດັ່ງກ່າວໃຫ້ຕົນ.

## ມາດຕາ 13. ການຮັບສິນບົນ

ການຮັບສິນບົນ ແມ່ນການຮັບເອົາ, ທວງເອົາ, ຂໍເອົາ ຫຼືຕົກລົງຮັບເອົາຊັບສິ່ງຂອງ ຫຼືຜົນປະ ໂຫຍດໃດໜຶ່ງຈາກຜູ້ອື່ນ ເພື່ອຜົນປະໂຫຍດຂອງຜູ້ໃຫ້ສິນບົນ ໂດຍທາງກົງ ຫຼືທາງອ້ອມ ດ້ວຍຖານະ ຕໍາແໜ່ງ, ສິດອໍານາດ, ໜ້າທີ່ຂອງຕົນ.

## ມາດຕາ 14. ການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່

ການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນແມ່ນການອີງໃສ່ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ຂອງຕົນ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼືພັກພວກ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼືສິດ ແລະຜົນປະໂຫຍດຂອງພົນລະເມືອງ.

## ມາດຕາ 15 ການສວຍໃຊ້ຊັບຂອງລັດ ຫລືລວມໝູ່

ການສວຍໃຊ້ຊັບຂອງລັດ ຫຼືລວມໝູ່ ແມ່ນການນໍາໃຊ້ຊັບຂອງລັດ ຫຼືລວມໝູ່ ເພື່ອຫາຜົນ ປະໂຫຍດສ່ວນຕົວ ຊຶ່ງໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍແກ່ຜົນປະໂຫຍດຂອງລັດ ຫຼືລວມໝູ່.

## ມາດຕາ 16 ການໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເກີນຂອບເຂດ

ການໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ເກີນຂອບເຂດ ແມ່ນການໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເກີນທີ່ລະບຽບກົດໝາຍໄດ້ກໍານົດໄວ້ ໂດຍເຈດຕະນາ

ເພື່ອຫາຜົນປະໂຫຍດໃຫ້ ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼືພັກພວກ ຊຶ່ງກໍ່ຄວາມເສຍຫາຍ ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼືສິດ ແລະຜົນປະໂຫຍດຂອງພົນລະເມືອງ.

### ມາດຕາ 17 ການຫຼັກໂລບ, ປອມແປງມາດຕະຖານ ເຕັກນິກກໍ່ສ້າງ

ການຫຼັກໂລບ, ປອມແປງມາດຕະຖານ ເຕັກນິກກໍ່ສ້າງ ແມ່ນການຫຼັກໂລບ, ປອມແປງ ມາດຕະຖານເຕັກນິກໃນການສຳຫຼວດ, ອອກແບບ, ຄິດໄລ່ ແລະອື່ນໆ ລະຫວ່າງ ເຈົ້າຂອງໂຄງການ ກັບຜູ້ຮັບເໝົາ ແລະຜູ້ທີ່ກ່ຽວຂ້ອງອື່ນໆ ກ່ຽວກັບກິດຈະການໃດໜຶ່ງເຊັ່ນ: ການກໍ່ສ້າງ, ການສ້ອມ ແປງ, ການປະດັບປະດາຕົບແຕ່ງ, ການຕິດຕັ້ງ ແລະກິດຈະການອື່ນໆ ເພື່ອຫາຜົນປະໂຫຍດ ສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດຂອງ ພົນລະເມືອງ.

### ມາດຕາ 18. ການໂກງການປະມູນ ຫຼືການສຳປະທານ

ການໂກງການປະມູນ ຫຼືການສຳປະທານ ແມ່ນການຕົກລົງກັນ ລະຫວ່າງເຈົ້າໜ້າທີ່ຂອງລັດ ກັບບໍລິສັດຮັບເໝົາ ແລະຜູ້ທີ່ກ່ຽວຂ້ອງອື່ນໆ ເພື່ອສ້າງເງື່ອນໄຂໃຫ້ຊະນະການປະມູນ ຫຼືສຳປະທານ ໃນກິດຈະການໃດໜຶ່ງຂອງລັດ ເພື່ອຫາຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະ ໂຫຍດຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດ ຂອງພົນລະເມືອງ.

### ມາດຕາ 19. ການປອມແປງເອກະສານ ຫຼືການໃຊ້ເອກະສານປອມ

ການປອມແປງເອກະສານ ແມ່ນການປອມແປງລາຍເຊັນ, ຕາປະທັບ, ຕັດ ຫຼືເພີ່ມຂໍ້ຄວາມ ໃດໜຶ່ງ ໃສ່ເນື້ອໃນເອກະສານ.

ການໃຊ້ເອກະສານປອມ ແມ່ນການນຳໃຊ້ເອກະສານ ທີ່ຮູ້ວ່າເປັນເອກະສານປອມ ແຕ່ນຳໄປໃຊ້ ເພື່ອຫາຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດ ຂອງພົນລະເມືອງ.

### ມາດຕາ 20. ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ

ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ ແມ່ນການເປີດເຜີຍເອກະສານ ຫຼື ຂໍ້ມູນລັບ, ການຕົກລົງຂອງລັດ ຫຼືທາງລັດຖະການ ທີ່ລັດບໍ່ອະນຸຍາດໃຫ້ເປີດເຜີຍ ເພື່ອຜົນປະໂຫຍດ ສ່ວນຕົວ.

### ມາດຕາ 21. ການກົດໜ່ວງ, ຖ່ວງດຶງເອກະສານ

ການກົດໜ່ວງ, ຖ່ວງດຶງເອກະສານ ແມ່ນການກັກ, ໜ່ວງໜ່ຽວ, ແກ່ຍາວເວລາໃນການແກ້ ໄຂເອກະສານທາງການ ໂດຍຜູ້ມີຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່

ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະຜົນປະໂຫຍດຂອງພົນລະເມືອງ.

## ໝວດທີ III ມາດຕະການສະກັດກັ້ນການສໍ້ລາດບັງຫຼວງ

### ມາດຕາ 22. ການເປັນແບບຢ່າງ ຂອງພະນັກງານນຳພາ

ພະນັກງານທຸກຂັ້ນ ເປັນຕົ້ນພະນັກງານການນຳ ຕ້ອງເປັນແບບຢ່າງ ໃນການປະຕິບັດລະບຽບ ກົດໝາຍຢ່າງເຂັ້ມງວດ, ດຳລົງຊີວິດຢ່າງປອດໃສຂາວສະອາດ, ບໍ່ສໍ້ລາດບັງຫຼວງ.

### ມາດຕາ 23. ຄວາມຮັບຜິດຊອບຂອງລັດ

ເພື່ອສະກັດກັ້ນການສໍ້ລາດບັງຫຼວງ ລັດມີຄວາມຮັບຜິດຊອບດັ່ງນີ້:

1. ສຶກສາອົບຮົມສະຕິເຄົາລົບ ແລະປະຕິບັດລະບຽບກົດໝາຍ ຢ່າງເຂັ້ມງວດ;
2. ປັບປຸງກົນໄກການບໍລິຫານລັດໃຫ້ດີ, ມີປະສິດທິຜົນ ແລະມີຄວາມໂປ່ງໃສ;
3. ກຳນົດ ແລະຈັດຕັ້ງປະຕິບັດນະໂຍບາຍດ້ານຕ່າງໆ ຕໍ່ພະນັກງານແຕ່ລະຂັ້ນໃຫ້ຈະແຈ້ງ ແລະຮັບປະກັນແກ້ໄຂຊີວິດການເປັນຢູ່ຢ່າງເໝາະສົມ;
4. ປະຕິບັດວິໄນ, ລົງໂທດຜູ້ກະທຳຜິດໃນສະຖານສໍ້ລາດບັງຫຼວງຢ່າງເຂັ້ມງວດ ແລະທັນການ;
5. ສົ່ງເສີມໃຫ້ປະຊາຊົນ, ສື່ມວນຊົນ ແລະການຈັດຕັ້ງສັງຄົມຕ່າງໆ ມີສ່ວນຮ່ວມໃນການ ສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ຕາມລະບຽບການ.

### ມາດຕາ 24. ຄວາມຮັບຜິດຊອບ ຂອງການຈັດຕັ້ງຕ່າງໆ

ການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ ທຸກຂັ້ນ ແຕ່ສູນກາງລົງຮອດທ້ອງຖິ່ນ ລວມທັງວິສາຫະກິດຂອງລັດ ຕ້ອງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ຮັບມອບໝາຍຢ່າງຄົບຖ້ວນ, ເຂັ້ມງວດ, ທັນການ ແລະດຳເນີນການສຳຫຼວດ ກວດກາ, ຕຳນິສົ່ງຂ່າວຊຶ່ງກັນແລະກັນຕໍ່ການປະຕິບັດໜ້າທີ່ວຽກງານຂອງພະນັກງານ ພ້ອມທັງ ສຶກສາອົບຮົມຢ່າງເປັນປົກກະຕິ, ປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງ ເພື່ອສະກັດກັ້ນ, ຕ້ານ ແລະແກ້ໄຂການສໍ້ລາດບັງຫຼວງ ຢູ່ໃນຄວາມຮັບຜິດຊອບຂອງຕົນ.

### ມາດຕາ 25. ຂໍ້ຫ້າມ ຕໍ່ຜູ້ທີ່ມີຖານະຕຳແໜ່ງ, ສິດອຳນາດ ແລະໜ້າທີ່

ຫ້າມຜູ້ທີ່ມີຖານະຕຳແໜ່ງ, ສິດອຳນາດ ແລະໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ຮັບເງິນ, ວັດຖຸສິ່ງຂອງ ຫລືຜົນປະໂຫຍດອື່ນໆ ຈາກບຸກຄົນ, ການຈັດຕັ້ງທີ່ກ່ຽວພັນກັບ ໜ້າທີ່ວຽກງານທີ່ຕົນຮັບຜິດຊອບ ຊຶ່ງອາດຈະສ້າງຄວາມ

ເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດ ຂອງພົນລະເມືອງ;

2. ສ້າງຄວາມຫຍຸ້ງຍາກ, ກົດໜ່ວງ, ຖ່ວງດຶງ, ແຊກແຊງ ໃນການແກ້ໄຂ ວຽກງານໃດໜຶ່ງ;
3. ເປີດບັນຊີເງິນຝາກ ຢູ່ນອກ ສ.ປ.ປ. ລາວ ໂດຍບໍ່ແຈ້ງໃຫ້ການຈັດຕັ້ງ ທີ່ກ່ຽວຂ້ອງຊາບ;
4. ເປັນທີ່ປຶກສາໃຫ້ແກ່ວິສາຫະກິດຂອງເອກະຊົນ ທີ່ພົວພັນເຖິງສິດຕິກລົງ ຂອງຕົນ ເພື່ອ ຜົນປະໂຫຍດສ່ວນຕົວ;
5. ເປັນນາຍໜ້າໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງ ເພື່ອຫາຜົນປະໂຫຍດ ສ່ວນຕົວເຊັ່ນ: ແລ່ນ ຄະດີ, ແລ່ນໂຄງການ, ຂໍໂກຕາ;
6. ໃຊ້ຖານະຕໍາແໜ່ງ ເພື່ອກູ້ຢືມເງິນຂອງສ່ວນລວມ ທີ່ຢູ່ໃນຄວາມຮັບຜິດ ຊອບຂອງຕົນ ໃຫ້ຜູ້ອື່ນ ຫຼືຄໍ້າປະກັນໃຫ້ຜູ້ອື່ນໄປກູ້ ຢືມເງິນຢູ່ທະນາຄານ;
7. ບັນຈຸ, ສັບຊ້ອນ ຫຼືແຕ່ງຕັ້ງເມຍ ຫຼືຜົວ, ລູກ ຫຼືຍາດໃກ້ຊິດຂອງຕົນ ເຂົ້າໃນຕໍາແໜ່ງນໍາ ພາໃນບາງຂົງເຂດວຽກງານທີ່ຕົນຮັບຜິດຊອບ ທີ່ຈະສ້າງ ເງື່ອນໄຂໃຫ້ມີການສໍ້ລາດບັງ ຫຼວງເຊັ່ນ: ວຽກງານຈັດຕັ້ງ, ວຽກງານກວດກາ, ການເງິນ-ການບັນຊີ, ຄັງເງິນ, ຮັກສາ ສາງ, ການຈັດຊື້- ຈັດຈ້າງ;
8. ຄອບຄອງ ຫຼືນໍາໃຊ້ເຮືອນ ຫຼືທີ່ດິນຂອງລັດ, ລວມໝູ່ ໂດຍບໍ່ຖືກຕ້ອງ ເພື່ອຫາຜົນປະ ໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ແລະພັກພວກ;
9. ເປີດເຜີຍຄວາມລັບຂອງລັດ ຫລືຄວາມລັບທາງລັດຖະການ;
10. ນໍາໃຊ້ເງິນ ຫຼືຊັບຂອງລັດ, ຂອງລວມໝູ່ ເພື່ອສັງສັນຊຸມແຊວ, ເອົາເປັນ ຂອງຂັວນ ຫຼື ແບ່ງ ປັນໃຫ້ພະນັກງານ ຫຼືບຸກຄົນອື່ນ ນອກລະບຽບກົດໝາຍ;
11. ປາບປາມ, ນາບຂູ່, ກົດໜ່ວງຜູ້ກ່າວຟ້ອງ, ຜູ້ຕໍານິສິ່ງຂ່າວ ແລະຜູ້ສະ ເໜີລາຍງານ ຂໍ້ມູນ ດ້ານຫຍໍ້ທໍ້ຕ່າງໆ ກ່ຽວກັບຕົນ;
12. ແອບອ້າງຊື່ສຽງ, ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ຂອງຂັ້ນເທິງ ຫຼືຂອງຜູ້ອື່ນ ເພື່ອ ຫາຜົນປະໂຫຍດສ່ວນຕົວ.

ພະນັກງານຜູ້ໃດ ຫາກໄດ້ລະເມີດຂໍ້ຫ້າມທີ່ກ່າວມາຂ້າງເທິງນີ້ ຈະຖືກສຶກສາອົບ ຮົມ ຫຼືປະຕິ ບັດວິໄນ; ໃນກໍລະນີທີ່ການລະເມີດນັ້ນ ຫາກເປັນການກະທໍາຜິດທາງອາຍາ ຈະຖືກລົງໂທດຕາມກົດ ໝາຍ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 26. ການແຈ້ງຊັບສິນ

ຜູ້ທີ່ມີຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງກົດໝາຍ ສະບັບນີ້ ກ່ອນ ແລະຫຼັງ ຮັບຕໍາແໜ່ງ, ໜ້າທີ່ ຕ້ອງແຈ້ງຊັບສິນ ແລະ ໜີ້ສິນຂອງຕົນ, ຂອງຜົວ ຫຼືເມຍ ແລະລູກ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ຢ່າງຊັດເຈນ, ສັດຊື່ບໍລິສຸດ ແລະມີຄວາມຮັບຜິດຊອບ ຕໍ່ກົດ ໝາຍ ກ່ຽວກັບເນື້ອໃນການແຈ້ງນັ້ນ.

ລັດຖະບານ ເປັນຜູ້ອອກລະບຽບການລະອຽດ ກ່ຽວກັບການແຈ້ງຊັບສິນ ແລະໜີ້ສິນ.

## ໝວດທີ IV ການດຳເນີນການກວດກາ ການສໍ້ລາດບັງຫຼວງ

### ມາດຕາ 27. ສາເຫດທີ່ພາໃຫ້ມີການດຳເນີນການກວດກາ

ສາເຫດທີ່ພາໃຫ້ມີການດຳເນີນການກວດກາ ຂອງອົງການຕ້ານການສໍ້ລາດບັງຫຼວງ ມີດັ່ງນີ້:

- ເມື່ອພົບເຫັນຂໍ້ມູນ, ຫຼັກຖານທີ່ໜ້າເຊື່ອຖືໄດ້ ກ່ຽວກັບການສໍ້ລາດບັງຫຼວງ;
- ມີແຈ້ງການ, ແຈ້ງຄວາມ, ການສະເໜີ, ລາຍງານ, ຄຳຮ້ອງຟ້ອງ ກ່ຽວກັບການສໍ້ລາດ ບັງຫຼວງ;
- ມີປາກົດການຮັ່ງມີຜິດປົກກະຕິ ຂອງພະນັກງານ, ຜົວ ຫຼືເມຍ, ລູກທີ່ຢູ່ໃນການຄຸ້ມຄອງ ຂອງຕົນ.

### ມາດຕາ 28. ຂັ້ນຕອນການດຳເນີນການກວດກາ

ການດຳເນີນການກວດກາການສໍ້ລາດບັງຫຼວງ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ຄົ້ນຄວ້າແຈ້ງການ, ແຈ້ງຄວາມ, ການສະເໜີ, ລາຍງານ ຫຼືຄຳຮ້ອງຟ້ອງ ແລະລົງເກັບ ກຳຂໍ້ມູນ ຖ້າເຫັນວ່າມີຄວາມຈຳເປັນ;
2. ກະກຽມ ແລະສ້າງແຜນການລົງກວດກາຕົວຈິງ ໂດຍປະສານສົມທົບກັບ ຂະແໜງການ ແລະທ້ອງຖິ່ນທີ່ກ່ຽວຂ້ອງ;
3. ກວດກາເອກະສານ ແລະຊັບສິນຂອງບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ກວດກາການເງິນ-ການບັນຊີ, ລາຍຮັບ-ລາຍຈ່າຍ, ການໃຊ້ຈ່າຍທຶນຊ່ວຍເຫຼືອ ແລະ ເງິນກູ້ຢືມ;
4. ຮຽກເຊີນຜູ້ຕາງໜ້າການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງມາອະທິບາຍ, ໃຫ້ຄວາມກະຈ່າງ ແຈ້ງ;
5. ສະຫຼຸບ, ຕີລາຄາ ແລະຕົກລົງຜົນຂອງການກວດກາ.

### ມາດຕາ 29. ການຕົກລົງ ກ່ຽວກັບຜົນຂອງການກວດກາ

ຜ່ານການກວດກາ ຖ້າມີຫຼັກຖານໜັກແໜ້ນ ອົງການຕ້ານການສໍ້ລາດບັງຫຼວງ ມີສິດຕົກລົງ ດັ່ງນີ້:

- ຖ້າຫາກເປັນການກະທຳຜິດໃນສະຖານເບົາ, ສ້າງຄວາມເສຍຫາຍບໍ່ຫຼາຍ ຕາມທີ່ໄດ້ ກຳນົດໄວ້ໃນມາດຕາ 32 ແລະ 33 ຂອງກົດໝາຍສະບັບນີ້ ຕ້ອງສະເໜີໃຫ້ອົງການທີ່ມີສິດ, ໜ້າທີ່ກ່ຽວ ຂ້ອງ ສຶກສາອົບຮົມ, ກ່າວເຕືອນ ຫຼືປະຕິບັດວິໄນຕໍ່ຜູ້ທີ່ກະທຳຜິດ;

- ຖ້າເຫັນວ່າ ເປັນການກະທຳຜິດໃນສະຖານໜັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້ ຕ້ອງດຳເນີນການສືບສວນ-ສອບສວນ ໃນກໍລະນີ ທີ່ມີຫຼັກຖານໜັກແໜ້ນ ແລ້ວສະຫຼຸບຄະດີ ສົ່ງໃຫ້ໄອຍະການປະຊາຊົນ ພິຈາລະນາ ສັ່ງຟ້ອງຂຶ້ນສານ.

### ມາດຕາ 30. ການປະຕິບັດຄຳສະເໜີ ຂອງອົງການຕ້ານການສໍ້ລາດບັງຫຼວງ

ອົງການທີ່ໄດ້ຮັບຄຳສະເໜີ ຂອງອົງການຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງກົດໝາຍສະບັບນີ້ ມີພັນທະປະຕິບັດ ພາຍໃນກຳນົດສາມສິບວັນນັບແຕ່ວັນທີ່ໄດ້ ຮັບຄຳສະເໜີເປັນຕົ້ນໄປ; ຖ້າຫາກບໍ່ປະຕິບັດຕາມຄຳສະເໜີແລ້ວ ອົງການຕ້ານການສໍ້ລາດບັງຫຼວງ ມີສິດສະເໜີໃຫ້ຂັ້ນເທິງທີ່ກ່ຽວຂ້ອງຖັດນັ້ນເປັນຜູ້ແກ້ໄຂ; ໃນກໍລະນີທີ່ບໍ່ປະຕິບັດຕາມຄຳສະເໜີໂດຍ ບໍ່ມີເຫດຜົນ ຈະຖືວ່າເປັນການລະເມີດກົດໝາຍ.

## ໝວດທີ V ມາດຕະການຕ້ານ ແລະແກ້ໄຂການສໍ້ລາດບັງຫຼວງ

### ມາດຕາ 31. ມາດຕະການແກ້ໄຂ

ການນຳໃຊ້ມາດຕະການຕ້ານການສໍ້ລາດບັງຫຼວງ ຕໍ່ພະນັກງານທີ່ກະທຳຜິດແມ່ນອີງຕາມ ການກະທຳຜິດໃນສະຖານເບົາ ຫຼືໜັກ.

ການກະທຳຜິດໃນສະຖານເບົາ ຈະຖືກນຳໃຊ້ມາດຕະການສຶກສາອົບຮົມ, ປະຕິບັດວິໄນ; ການກະທຳຜິດໃນສະຖານໜັກ ຈະຖືກດຳເນີນຄະດີຕາມກົດໝາຍ.

### ມາດຕາ 32. ການສຶກສາອົບຮົມ

ຜ່ານການດຳເນີນການກວດກາ ຫາກພົບເຫັນການກະທຳຜິດເບົາ, ຜູ້ກະທຳຜິດມີຄວາມຈິງ ໃຈລາຍງານ, ຮັບສາລະພາບການກະທຳຜິດຂອງຕົນຕໍ່ການຈັດຕັ້ງ ແລະສິ່ງຊັບທີ່ໄດ້ເອົາໄປ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ຄົບຖ້ວນແລ້ວ ຈະໄດ້ຮັບການສຶກສາອົບຮົມ ແລະກ່າວເຕືອນ.

### ມາດຕາ 33. ການປະຕິບັດວິໄນ

ພະນັກງານຜູ້ໃດ ທີ່ໄດ້ກະທຳຜິດເບົາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດ ຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີດັ່ງນີ້:

- ຕິຕຽນ, ກ່າວເຕືອນຄວາມຜິດ ໂດຍບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດ ຂອງຜູ້ກ່ຽວ;
- ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ;
- ປົດຕຳແໜ່ງ ຫຼືຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
- ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນເອົາໄປໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ຄົບຖ້ວນ.

### ມາດຕາ 34. ການດຳເນີນຄະດີ

ພາຍຫຼັງທີ່ໄດ້ດຳເນີນການກວດກາ, ສືບສວນ-ສອບສວນ ເຫັນວ່າມີຂໍ້ມູນ, ຫຼັກຖານໜັກແໜ້ນ, ຮັດກຸມແລ້ວ ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງສະຫຼຸບຄະດີແລ້ວປະກອບສຳນວນ ສົ່ງ ໃຫ້ໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງຂຶ້ນສານ.

ໃນກໍລະນີທີ່ໄອຍະການປະຊາຊົນ ບໍ່ພິຈາລະນາສັ່ງຟ້ອງຂຶ້ນສານ ພາຍໃນສາມສິບວັນນັບ ແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ໂດຍບໍ່ມີເຫດຜົນ ອົງການຕ້ານການສໍ້ລາດບັງຫຼວງ ມີສິດສະ ເໜີໃຫ້ ໄອຍະການປະຊາຊົນຂັ້ນເທິງຖັດນັ້ນ ພິຈາລະນາແກ້ໄຂ.

## ໝວດທີ VI ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

### ມາດຕາ 35. ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ຕ້ອງນຳ ມາຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຕາມກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ຫ້າມບຸກຄົນ ຫຼືການຈັດຕັ້ງ ແຊກແຊງ, ຂັດຂວາງ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບການສໍ້ລາດບັງຫຼວງ ຢ່າງເດັດຂາດ.

### ມາດຕາ 36. ການກວດກາການປະຕິບັດຄຳຕັດສິນຂອງສານ

ອົງການຕ້ານການສໍ້ລາດບັງຫຼວງ ແລະອົງການອື່ນໆທີ່ກ່ຽວຂ້ອງ ຕ້ອງຕິດຕາມກວດກາ, ຊຸກຍູ້, ໃຫ້ການຊ່ວຍເຫຼືອ ແກ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄະດີການສໍ້ລາດບັງຫຼວງ ຕາມພາລະບົດບາດ, ສິດແລະໜ້າທີ່ຂອງຕົນ ເພື່ອຮັບປະກັນໃຫ້ຄຳຕັດສິນຂອງສານດັ່ງກ່າວໄດ້ຮັບ ການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ໃນຂອບເຂດທົ່ວປະເທດ.

## ໝວດທີ VII ອົງການຕ້ານການສໍ້ລາດບັງຫຼວງ

### ມາດຕາ 37. ທີ່ຕັ້ງ, ພາລະບົດບາດ

ອົງການຕ້ານການສໍ້ລາດບັງຫຼວງ ແມ່ນອົງການລັດ ຊຶ່ງມີພາລະບົດບາດ ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ອົງການກວດກາແຫ່ງລັດ ຢູ່ຂັ້ນສູນ ກາງ ແລະອົງການກວດກາລັດຂັ້ນແຂວງ ເປັນຜູ້ຈັດຕັ້ງປະຕິບັດ.

ອົງການຕ້ານການສໍ້ລາດບັງຫຼວງ ມີຖານະເປັນອົງການສືບສວນ-ສອບສວນ ແລະປະຕິບັດ ພາລະບົດບາດຂອງຕົນ ຢ່າງເປັນເອກະລາດ.

### ມາດຕາ 38. ລະບົບການຈັດຕັ້ງ

ລະບົບການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ ປະກອບດ້ວຍ:

- ຂັ້ນສູນກາງ;
- ຂັ້ນແຂວງ.

ອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ມີຖານະທຽບເທົ່າກະຊວງ, ຫົວໜ້າອົງການ ດັ່ງກ່າວຖືກແຕ່ງຕັ້ງ ຫຼືປົດຕໍາແໜ່ງຕາມວິທີການດຽວກັນກັບສະມາຊິກລັດຖະບານ.

ອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ມີຖານະທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການດັ່ງກ່າວ ຖືກແຕ່ງຕັ້ງ ຫຼືປົດຕໍາແໜ່ງໂດຍ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຂັ້ນສູນ ກາງ ພາຍຫລັງໄດ້ປະສານສົມທົບກັບເຈົ້າແຂວງ, ເຈົ້າຄອງນະຄອນ ຫຼືຫົວໜ້າເຂດພິເສດ.

ສໍາລັບກົງຈັກຊ່ວຍວຽກແຕ່ລະຂັ້ນ ແມ່ນປະຕິບັດ ຕາມລະບຽບການທົ່ວໄປຂອງການບໍລິ ຫານລັດ.

### ມາດຕາ 39. ສິດ ແລະໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ

ອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ມີສິດ ແລະໜ້າທີ່ຕົ້ນຕໍດັ່ງນີ້:

1. ຄົ້ນຄ້ວານະໂຍບາຍ, ທິດທາງແຜນການ, ກົດໝາຍ, ລະບຽບການ ແລະມາດຕະການກ່ຽວກັບການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີໃຫ້ລັດຖະບານພິຈາ ລະນາຕົກລົງ;
2. ຊີ້ນໍາ, ກວດກາການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງໃນຂອບເຂດທົ່ວປະເທດ;
3. ດໍາເນີນວຽກງານຕ່າງໆ ກ່ຽວກັບການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງໃນ ຖັນແຖວພະນັກງານໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນພະນັກງານທີ່ສູນກາງ ຄຸ້ມຄອງ ແລະພະນັກງານອື່ນ ຂອງອົງການຈັດຕັ້ງທີ່ຢູ່ອ້ອມຂ້າງສູນກາງ;
4. ດໍາເນີນການສືບສວນ-ສອບສວນ ກ່ຽວກັບການສໍ້ລາດບັງຫຼວງ ໂດຍນໍາໃຊ້ມາດຕະການຕ່າງໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການດໍາເນີນຄະດີອາຍາ;
5. ສະເໜີງົດຕໍາແໜ່ງ, ໜ້າທີ່ຊົ່ວຄາວ ຫຼືບໍ່ໃຫ້ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນຜູ້ຖືກກວດກາໃນເວລາການກວດກາບໍ່ທັນສິ້ນສຸດ;
6. ພົວພັນ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢູ່ສູນກາງ ແລະທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດສິດ, ໜ້າທີ່ຂອງຕົນ;
7. ພິຈາລະນາ, ຕົກລົງ ແລະນໍາໃຊ້ມາດຕະການຕ່າງໆຕໍ່ຜູ້ຖືກກວດກາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

8. ສະຫຼຸບຜົນຂອງການປະຕິບັດວຽກງານສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ແລ້ວ ລາຍງານໃຫ້ນາຍົກລັດຖະມົນຕີ ແລະຄະນະປະຈຳສະພາແຫ່ງຊາດ ແຕ່ລະໄລຍະ;
9. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 40. ສິດ ແລະໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ**

ອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ມີສິດ ແລະໜ້າທີ່ຕົ້ນຕໍດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ທິດທາງແຜນການ, ກົດໝາຍ, ລະບຽບການ ແລະມາດ ຕະການກ່ຽວກັບການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ;
2. ດຳເນີນວຽກງານຕ່າງໆ ກ່ຽວກັບການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ໃນຖັນແຖວພະນັກງານ ທີ່ບໍ່ແມ່ນສູນກາງຄຸ້ມຄອງ ຢູ່ທ້ອງຖິ່ນຂອງຕົນ;
3. ດຳເນີນການສືບສວນ-ສອບສວນ ກ່ຽວກັບການສໍ້ລາດບັງຫຼວງ ໂດຍນຳໃຊ້ມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ;
4. ສະເໜີງົດຕຳແໜ່ງ, ໜ້າທີ່ ຊົ່ວຄາວ ຫຼືບໍ່ໃຫ້ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນຜູ້ຖືກກວດ ກາ ໃນເວລາການກວດກາບໍ່ທັນສິ້ນສຸດ;
5. ພົວພັນ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;
6. ພິຈາລະນາ, ຕົກລົງ ແລະນຳໃຊ້ມາດຕະການຕ່າງໆຕໍ່ຜູ້ຖືກກວດກາ ຕາມທີ່ໄດ້ກຳ ນົດ ໄວ້ໃນກົດໝາຍ;
7. ສະຫຼຸບຜົນຂອງການປະຕິບັດວຽກງານສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ ແລ້ວ ລາຍງານໃຫ້ອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນ ຫຼື ຫົວໜ້າເຂດພິເສດ ແລະຫົວໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳ ເຂດເລືອກຕັ້ງແຕ່ລະໄລຍະ;
8. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 41. ມາດຕະຖານ, ເງື່ອນໄຂ ຂອງພະນັກງານຕ້ານການສໍ້ລາດບັງຫຼວງ**

ພະນັກງານຕ້ານການສໍ້ລາດບັງຫຼວງ ມີມາດຕະຖານ, ເງື່ອນໄຂ ດັ່ງນີ້:

1. ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມສັດຊື່ບໍລິສຸດ, ໂປ່ງໃສ, ບໍ່ສໍ້ລາດ ບັງຫຼວງ;
2. ມີຄວາມຮູ້, ຄວາມສາມາດ ແລະລະດັບວິຊາສະເພາະ ສົມຄູ່ກັບວຽກງານທີ່ຕົນຮັບ ຜິດ ຊອບ;

3. ມີຄວາມຍຸຕິທຳ, ເບິ່ງບັນຫາເລິກເຊິ່ງ, ຮອບຄອບ, ພາວະວິໄສ, ບໍ່ລຳອຽງ, ບໍ່ອະຄະຕິ, ໄຈ້ແຍກຂໍ້ມູນຢ່າງຖືກຕ້ອງ, ຊັດເຈນ ແລະກ້າຫານໃນການຕັດສິນບັນຫາ;
4. ເປັນຜູ້ເຄັ່ງຄັດ ແລະເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍ, ມີສະຕິ ຕໍ່ການ ຈັດຕັ້ງສູງ, ບໍ່ປະນີປະນອມ, ເດັດດ່ຽວສະກັດກັ້ນ ແລະຕ້ານ ທຸກປາກົດການສໍ້ລາດບັງ ຫຼວງ.

ສຳລັບຜູ້ທີ່ເປັນຫົວໜ້າ ຕ້ອງແມ່ນຜູ້ທີ່ມີຖານະການເມືອງສຳຄັນ, ມີບົດບາດອິດທິພົນ ແລະ ໄດ້ຮັບຄວາມເຊື່ອຖືຈາກສັງຄົມ.

## ໝວດທີ VIII ພັນທະ, ຄວາມຮັບຜິດຊອບ ແລະສິດ ຂອງຜູ້ຖືກກວດກາ

### ມາດຕາ 42. ພັນທະ ແລະຄວາມຮັບຜິດຊອບຂອງຜູ້ຖືກກວດກາ

ການຈັດຕັ້ງ ແລະບຸກຄົນທີ່ຖືກກວດກາ ມີພັນທະ ແລະຄວາມຮັບຜິດຊອບດັ່ງນີ້:

1. ໃຫ້ການຮ່ວມມື, ອຳນວຍຄວາມສະດວກໃຫ້ແກ່ການກວດກາ, ສະໜອງຂໍ້ມູນຂ່າວ ສານ, ເອກະສານຕ່າງໆໃຫ້ທັນເວລາ, ໃຫ້ຄຳຊີ້ແຈງ, ອະທິບາຍ ຕາມການສະເໜີ ຂອງພະນັກງານກວດກາ;
2. ປະຕິບັດຕາມຄຳສັ່ງ, ຄຳແນະນຳ, ແຈ້ງການ, ຄຳສະເໜີ ແລະຄຳຕົກລົງຂອງອົງ ການຕ້ານການສໍ້ລາດບັງຫຼວງ ຢ່າງເຂັ້ມງວດ ແລະທັນເວລາ;
3. ຫ້າມມອບ, ໂອນ, ຂາຍ, ສັບປ່ຽນຊັບສິນຕ່າງໆຂອງຕົນ ໃນເວລາການກວດກາຍັງບໍ່ທັນສຳເລັດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກອົງການຕ້ານການສໍ້ລາດບັງຫລວງ.

ຖ້າບຸກຄົນ ຫຼືການຈັດຕັ້ງທີ່ຖືກກວດການັ້ນ ຫາກບໍ່ປະຕິບັດພັນທະ ແລະຄວາມຮັບຜິດຊອບ ທີ່ກ່າວມາເທິງນີ້ ຫຼືຂັດຂວາງ, ບໍ່ໃຫ້ການຮ່ວມມືໃນການກວດກາ ຈະຖືວ່າເປັນການລະເມີດລະບຽບກົດໝາຍ ແລະຈະຖືກກ່າວເຕືອນ, ປະຕິບັດວິໄນ ຫຼືຖືກປະຕິບັດມາດຕະການອື່ນໆ ຕາມທີ່ໄດ້ກຳນົດ ໄວ້ໃນກົດໝາຍ.

### ມາດຕາ 43. ສິດຂອງຜູ້ຖືກກວດກາ

ການຈັດຕັ້ງ ແລະບຸກຄົນທີ່ຖືກກວດກາ ມີສິດດັ່ງນີ້:

1. ປົກປ້ອງຕົນເອງ, ແກ້ຂໍ້ກ່າວຫາ ດ້ວຍການນຳເອົາຂໍ້ມູນ, ຫຼັກຖານມາຊີ້ແຈງ, ອະທິ ບາຍ ຕໍ່ອົງການຕ້ານການສໍ້ລາດບັງຫຼວງ;
2. ຄ້ານຕົວພະນັກງານກວດກາ ທີ່ມີຂໍ້ຂັດແຍ່ງ ຫຼືມີອະຄະຕິຕໍ່ກັນມາກ່ອນ;
3. ສະເໜີ, ລາຍງານຄຳຄິດຄຳເຫັນ, ຊີ້ແຈງເຫດຜົນຂອງຕົນ ຕໍ່ການຈັດຕັ້ງຂັ້ນເທິງ ເພື່ອ ໃຫ້ພິຈາລະນາຄືນ ຄຳຕົກລົງກ່ຽວກັບຜົນຂອງການກວດກາ ຂອງອົງການຕ້ານການສໍ້

ລາດບັງຫຼວງ; ການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງນັ້ນ ຕ້ອງພິຈາລະນາ ແລະຕອບຜູ້ກ່ຽວ ພາຍໃນສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ, ຄຳຊີ້ແຈງເປັນຕົ້ນໄປ;

4. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ຖືກກວດກາ ສາມາດດຳເນີນການປົກປ້ອງດ້ວຍຕົນເອງ, ເອົາທະນາຍຄວາມ ຫຼື ຜູ້ປົກປ້ອງ ອື່ນຊ່ວຍເຫຼືອທາງດ້ານກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

## ໝວດທີ IX ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 44. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ ຫຼືການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນແມ່ນ ໄດ້ໃຫ້ການຮ່ວມມື, ສະໜອງຂໍ້ມູນ ກ່ຽວກັບການສໍ້ລາດບັງຫຼວງ ຈະໄດ້ຮັບການປົກປ້ອງຄວາມປອດໄພ ແລະຈະໄດ້ຮັບການຍ້ອງຍໍ, ປະຕິບັດນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 45. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼືການຈັດຕັ້ງ ຫາກໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນ ປະໂຫຍດຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດຂອງພົນລະເມືອງ ຈະຖືກປະຕິບັດມາດຕະ ການສຶກສາອົບຮົມ ຫຼືປະຕິບັດວິໄນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ແລະ 33 ຂອງກົດໝາຍສະ ບັບນີ້ ຫຼືປະຕິບັດມາດຕະການທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼືໜັກ ລວມທັງໃຊ້ແທນຄ່າເສຍ ຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 46. ມາດຕະການທາງອາຍາ

ພະນັກງານຜູ້ໃດ ຫາກໄດ້ມີພຶດຕິກຳທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ທີ່ເປັນການກະທຳຜິດໜັກ ຈະຖືກປະຕິບັດມາດຕະການທາງອາຍາ.

ສຳລັບການຍັກຍອກ, ສໍ້ໂກງຊັບຂອງລັດ ຫຼືລວມໝູ່, ຮັບສິນບົນ, ສວຍໃຊ້ຖານະຕຳແໜ່ງ ສິດອຳນາດ ໜ້າທີ່, ສວຍໃຊ້ຊັບຂອງລັດ ຫຼືລວມໝູ່, ໃຊ້ຖານະຕຳແໜ່ງ ສິດອຳນາດ ໜ້າທີ່ ເກີນຂອບເຂດ, ປອມແປງເອກະສານ ຫຼືໃຊ້ເອກະສານປອມ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນກົດ ໝາຍອາຍາ.

### ມາດຕາ 47. ການຫຼົກໂລບ, ການປອມແປງ ມາດຕະຖານເຕັກນິກກໍ່ສ້າງ, ອອກແບບ, ຄິດໄລ່

ພະນັກງານຜູ້ໃດ ຫາກໄດ້ຫຼົກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ສຳຫລວດ, ອອກແບບ, ຄິດໄລ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາ ຫ້າປີ ແລະຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ ຂອງມູນຄ່າທີ່ເສຍຫາຍ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການຫຼັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ສຳຫລວດ, ອອກແບບ, ຄິດໄລ່ ເປັນອາຈິນ ແລະມີຜົນເສຍຫາຍຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ຫ້າປີ ຫາ ສິບຫ້າປີ ແລະຈະຖືກປັບໃໝໜຶ່ງສ່ວນຮ້ອຍຂອງມູນຄ່າທີ່ເສຍຫາຍ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການຫຼັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ສຳຫລວດ, ອອກແບບ, ຄິດໄລ່ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ແລະມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສິບຫ້າປີ ຫາຊາວປີ ແລະຈະຖືກປັບໃໝໜຶ່ງສ່ວນຮ້ອຍ ຂອງມູນຄ່າທີ່ເສຍຫາຍ.

### ມາດຕາ 48. ການໂກງການປະມູນ ຫຼືການສຳປະທານ

ພະນັກງານຜູ້ໃດຫາກໄດ້ໂກງການປະມູນ ຫຼືການສຳປະທານ ຈະຖືກລົງໂທດຕັດອິດສະລະພາບ ແລະຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້.

### ມາດຕາ 49. ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດ

ພະນັກງານຜູ້ໃດ ຫາກໄດ້ເປີດເຜີຍຄວາມລັບຂອງລັດ ຫຼືທາງລັດຖະການ ເພື່ອຫາຜົນປະໂຫຍດສ່ວນຕົວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາສາມປີ ແລະຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ10.000.000 ກີບ.

### ມາດຕາ 50. ການກົດໜ່ວງ, ຖ່ວງດຶງເອກະສານ

ພະນັກງານຜູ້ໃດ ຫາກໄດ້ເຈດຕະນາກົດໜ່ວງ, ຖ່ວງດຶງເອກະສານ ເພື່ອຫາຜົນປະໂຫຍດໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມເດືອນ ຫາ ໜຶ່ງປີ ແລະຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ.

### ມາດຕາ 51. ມາດຕະການທາງແພ່ງ

ພະນັກງານຜູ້ໃດ ຫາກໄດ້ກະທຳຜິດໃນສະຖານສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼືສິດ ແລະຜົນປະໂຫຍດຂອງພົນລະເມືອງ ນອກຈາກຈະໄດ້ຮັບໂທດທາງອາຍາແລ້ວ ຍັງຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ ແລະຊັບສິນທີ່ໄດ້ມາຈາກການກະທຳຜິດ ຈະຖືກຮິບ ເປັນຂອງລັດທັງໝົດ.

## ໝວດທີ X ບົດບັນຍັດສຸດທ້າຍ

### ມາດຕາ 52. ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກດຳລັດ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 53. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງທີ່ກາສິບວັນ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ